INDAVONG et al. (2021). Souphanouvong University Journal of Multidisciplinary Research and Development, ISSN 2521-0653. Volume 7. Issue 2. July – December 2021. Page 249 - 259

# ທັດສະນະຄະຕິຂອງປະຊາຊົນລາວທີ່ມີຕໍ່ການໃຊ້ວິຖີຊີວິດປົກກະຕິແບບໃໝ່ ໃນຊ່ວງການ ແຜ່ລະບາດພະຍາດ Covid-19

**ດາລຸນນີ ອິນດາວົງ[1], ສັງທອງ ສີຟອງໄຊ, ດາວອນ ສີສຸລາດ, ສົມຄິດ ສຸລິຍະສັກ, ນໍ້າຝົນ ຈິດຕະພອນ ແລະ ສິດທິວິກອນ ເພັງສະຫວັດ**

*ພາກວິຊາບໍລິຫານທຸລະກິດ, ຄະນະເສດຖະສາດ ແລະ ການທ່ອງທ່ຽວ ມະຫາວິທະຍາໄລສຸພານຸວົງ, ສປປ ລາວ*

[1] ***ຕິດຕໍ່ພົວພັນ:*** *ດາລຸນນີ ອິນດາວົງ, ພາກວິຊາບໍລິຫານທຸລະກິດ, ຄະນະເສດຖະສາດ ແລະ ການທ່ອງທ່ຽວ, ມະຫາວິທະຍາໄລສຸພານຸວົງ, ໂທລະສັບ: 0305609777, ໂທລະສັບມືຖື: 020-59264777, E-mail: indavong.SU@gmail.com*

***ຂໍ້ມູນບົດຄວາມ:***

*ການສົ່ງບົດຄວາມ: 11ສິງຫາ2021*

*ປັບປຸງສໍາເລັດ: 29 ຕຸລາ 2021*

*ການຕອບຮັບ: 04 ພະຈິກ 2021*

**ບົດຄັດຫຍໍ້**

ການວິໄຈຄັ້ງນີ້ມີຈຸດປະສົງເພື່ອສຶກສາລະດັບຄວາມຮູ້ຄວາມເຂົ້າໃຈຂອງປະຊາຊົນລາວຕໍ່ກັບພະຍາດໂຄວິດ-19, ສຶກສາພຶດຕິກໍາການປະຕິບັດຕົວຂອງປະຊາຊົນລາວຕໍ່ການປ້ອງກັນພະຍາດໂຄວິດ-19 ແລະ ສຶກສາຄວາມຄິດເຫັນຂອງປະຊາຊົນລາວຕໍ່ການໃຊ້ຊີວິດປົກກະຕິໃນຊ່ວງທີ່ມີການແຜ່ລະບາດຂອງພະຍາດໂຄວິດ-19. ປະຊາກອນທີ່ໃຊ້ໃນການຄົ້ນຄວ້າແມ່ນປະຊາຊົນລາວທີ່ອາໄສໃນປະເທດລາວ ໂດຍມີກຸ່ມຕົວຢ່າງຈໍານວນທັງໝົດ 690 ຄົນ ເປັນການສຸ່ມຕົວຢ່າງທາງອອນລາຍ ຈາກ google form, ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າແມ່ນແບບສອບຖາມ ໂດຍມີຄ່າຄວາມໜ້າເຊື່ອຖືເທົ່າກັບ 0.922, ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນໄດ້ແກ່: ຄ່າຄວາມຖີ່, ຄ່າສ່ວນຮ້ອຍ, ຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານ, ຜົນການສຶກສາພົບວ່າ:

ທັດສະນະຕິຂອງປະຊາຊົນລາວທີ່ມີຕໍ່ການໃຊ້ວິຖີຊີວິດປົກກະຕິແບບໃໝ່ ໃນຊ່ວງການແຜ່ລະບາດພະຍາດໂຄວິດ-19 ແມ່ນປະຊາຊົນລາວມີຄວາມຮູ້ ຄວາມເຂົ້າໃຈທີ່ຖືກຕ້ອງຫຼາຍທີ່ສຸດຕໍ່ກັບພະຍາດໂຄວິດ-19 ແລະ ແນວທາງການປ້ອງກັນພະຍາດ Covid-19, ມີພຶດຕິກໍາການປ້ອງກັນຕົວເອງຈາກພະຍາດໂຄວິດ-19 ຢູ່ໃນລະດັບທີ່ດີ, ມີວິຖີໃນການດາລົງຊີວິດປົກກະຕິແບບໃໝ່ໃນຊ່ວງການແຜ່ລະບາດຂອງພະຍາດໂຄວິດ-19 ທີ່ປອດໄພ, ຖືກຕ້ອງ ແລະ ເປັນແບບຢ່າງທີ່ດີຕໍ່ບຸກຄົນທົ່ວໄປຄື: ໃສ່ຜ້າອັດປາກອັດດັງ (ໃສ່ Mas) ເມື່ອອອກຈາກບ້ານ, ຫຼີກລ້ຽງການເຂົ້າໄປໃກ້ກຸ່ມສ່ຽງ ຫຼື ຜູ້ທີ່ມີອາການປ່ວຍ, ຫຼີກລ້ຽງການສໍາພັດກັບຜູ້ອື່ນໆ, ລ້າງມືທຸກຄັ້ງດ້ວຍເຈວທີ່ມີເຫຼົ້າເກົ້າສິບປະສົມ ເວລາມີການຈັບບາຍສິ່ງຂອງໃນທີ່ສາທາລະນະ, ຮັບປະທານອາຫານທີ່ມີປະໂຫຍດຫຼີກລ້ຽງການຮັບປະທານອາຫານດິບ. ນອກຈາກນີ້ຍັງມີຄວາມຄິດເຫັນວ່າ: ໜ້າກາກອະນາໄມທີ່ໃຊ້ປິດປາກ-ປິດດັງ ແລະ ເຈວລ້າງມືທີ່ມີສ່ວນປະສົມຂອງເຫຼົ້າເກົ້າສິບແມ່ນສາມາດເປັນອຸປະກອນທີ່ຊ່ວຍໃນການປ້ອງກັນຕົວເອງຈາກເຊື້ອໂລກໂຄວິດ-19 ໄດ້ ແລະ ເປັນອຸປະກອນທີ່ສາມາດຢຸດການກະຈາຍເຊື້ອໄປສູ່ບຸກຄົນອື່ນໄດ້ ແລະ ເປັນສິ່ງທີ່ທຸກຄົນຕ້ອງການ ແລະ ເປັນສິ່ງທີ່ມີການຊົມໃຊ້ກັນຫຼາຍຂຶ້ນຈົນກາຍເປັນເລື່ອງປົກກະຕິຂອງຕົນ. ຄວາມຄິດເຫັນທີ່ມີຕໍ່ດ້ານສຸຂະພາບ ຫຼື ການເບິ່ງແຍງຕົນເອງເພື່ອປ້ອງກັນພະຍາດໂຄວິດ-19 ແມ່ນຫຼຸດຜ່ອນການອອກໄປພົບປະຜູ້ຄົນໃນສັງຄົມ, ຫັນມາເຮັດວຽກຢູ່ບ້ານ ແລະ ມີເວລາໃຫ້ຄອບຄົວຫຼາຍຂຶ້ນ. ທາງດ້ານດ້ານເສດຖະກິດ ແມ່ນຄິດວ່າຄວນມີລະບຽບວິໄນໃນການໃຊ້ເງິນຂອງຕົນເອງຫຼາຍຂຶ້ນ ຄໍານຶງເຖິງການໃຊ້ຈ່າຍເງິນຫຼາຍຂຶ້ນ ແລະ ດ້ານທຸລະກິດແມ່ນຈະເຂົ້າຮ້ານຄ້າມີຈຸດກັ່ນກອງ ແລະ ມີເຈວແອວກໍຮໍອະນາໄມມືກ່ອນເຂົ້າຮ້ານ.

**ຄໍາສໍາຄັນ:** *ວິຖີຊີວິດປົກກະຕິແບບໃໝ່, ພະຍາດໂຄວິດ-19, ທັດສະນະຄະຕິ, ພຶດຕິກໍາ*

INDAVONG et al. (2021). Souphanouvong University Journal of Multidisciplinary Research and Development, ISSN 2521-0653. Volume 7. Issue 2. July – December 2021. Page 249 - 259

# Attitudes of the Lao People towards the New Normal During the Outbreak of the Covid-19

**Dalounny INDAVONG[1], Sangthong SIFONGXAY, Davone SISOULAT, Somkith SOULIYASACK, Namfonh CHITTAPHONE and Sitthivikone PHENGSAVAT**

*Department of Business Management, Faculty of Economics and Tourism, Souphanouvong University, Lao*

***[1]Correspondence:** Dalounny INDAVONG, Department of Business Managrement, Faculty of Economics and Tourism, Souphanouvong University. Tel: 020-59264777, E-mail:* indavong.su@gmail.com

***Article Info:***
*Submitted: Aug 11, 2021*
*Revised: Oct 29, 2021*
*Accepted: Nov 04, 2021*

**Abstract**

The purpose of this research were: 1) to study Laos peoples' cognitive of the Covid-19, 2) to study Laos peoples' behavior towards the Prevention of Covid-19 and 3) to study Lao people's opinion on the new normal during the covid-19 epidemic. The samples were 690 Lao peoples who live in Laos by using an online questionnaire from Google form. The Cronbach alpha reliability coefficient was 0.922. Statistical methods used in data analysis were descriptive statistics such as the frequency, percentage, mean and standard deviation. The major findings found that:

The attitude of Lao people on new normal during the Covid-19 pandemic Lao peoples had the most accurate knowledge of Covid-19 and prevention of Covid-19, there were good self-defense behaviors and there a new normal during the pandemic wearing a mask (Mas) when going out, avoiding contact with vulnerable groups or people who are sick, avoiding contact with others, washing your hands every time with 90% alcohol by volume when handling things in public, eating nutritious food, avoiding eating raw food. Masks and alcohol sprays have been found to be effective in protecting the body from COVID-19 and preventing the virus from spreading to other people, which is becoming more common. In terms of health or self-care to prevent COVID-19, it was found that Lao people have reduced their outreach to society and have turned to living and working at home and having more time for their families. In terms of economically, Lao people will be more disciplined in spending their money, concerned with spending their money and many businesses will have checkpoints for customers before entering the shops, and they will have hand sanitizer before entering the shops too.

**Keywords:** *New Normal, Covid-19 Pandemic, Attitude, Behavior.*

## 1. ພາກສະເໜີ (Background)

ໄວລັດໂຄໂລນ່າເປັນໄວລັດໃນສັດ ມີຫຼາຍສາຍພັນ ໂດຍປົກກະຕິກໍ່ບໍ່ໃຫ້ເກີດໂລກໃນຄົນແຕ່ເມື່ອກາຍພັນເປັນສາຍພັນໃໝ່ທີ່ກໍ່ໂລກໃນມະນຸດໄດ້ (ເຊິ່ງມັດເກີດຈາກການຈັດການທີ່ຜິດທຳມະຊາດໂດຍມະນຸດ) ໃນຄະນະທີ່ມະນຸດຍັງບໍ່ຮູ້ຈັກ ແລະ ບໍ່ມີພູມຕ້ານທານກໍ່ຈະເກີດການລະບາດຂອງພະຍາດໃນຄົນ, ພະຍາດໂຄວິດ-19 (COVID-19 ຫຍໍ້ມາຈາກ Coronavirus disease 2019) ເປັນພະຍາດ

ຕິດເຊື້ອທາງເດີນຫາຍໃຈທີ່ເກີດຈາກໄວລັດໂຄໂລນ່າ ເຊິ່ງມີຊື່ທາງການວ່າ SARS-CoV-2 ເຮັດໃຫ້ເກີດໄຂ້, ໄອ ແລະ ອາດມີປອດອັດເສບ, ເລີ່ມພົບຜູ້ປ່ວຍຄັ້ງທຳອິດເມື່ອ ເດືອນ ທັນວາ 2019 ທີ່ເມືອງອູຮັ່ນ ເມືອງຫຼວງຂອງມົນທົນຫູເປີຍ ພາກກາງຂອງປະເທດຈີນ ເຊິ່ງເປັນເມືອງໃຫຍ່ມີຜູ້ຄົນໜາແໜ້ນ ຈຶ່ງເຮັດໃຫ້ເກີດການລະບາດໃຫຍ່ໄດ້ຢ່າງວ່ອງໄວ, ການເບິ່ງແຍງຮັກສາເປັນໄປຢ່າງສຸກເສີນ, ມີຄົນປ່ວຍເຈັບໜັກ ແລະ ຕາຍຫຼວງຫຼາຍທີ່ຄວນຈະເປັນ ຈົນປະເທດຈີນຕ້ອງປິດເມືອງ ແລະ ປິດປະເທດ ຕໍ່ມາໃນຄະນະນີ້ ປະເທດຈີນ ສາມາດຄວບຄຸມການແຜ່ລະບາດຂອງເຊື້ອຕົວນີ້ໄດ້ຈົນເກືອບວ່າຈະບໍ່ມີຜູ້ປ່ວຍລາຍໃໝ່ເກີດຂຶ້ນ ແຕ່ໂດຍທຳມະຊາດແລ້ວ ຈະຍັງມີຜູ້ທີ່ມີເຊື້ອຢູ່ ແລະ ມີຜູ້ປ່ວຍໄດ້ເດີນທາງໄປຫຼາຍປະເທດໃນໂລກ ແລະ ມີຜູ້ປ່ວຍອີກຫຼາຍກໍລະນີທີ່ເດີນທາງມາຈາກປະເທດອື່ນທີ່ມີການລະບາດຂອງພະຍາດຕິດເຊື້ອໂຄວິດ-19, ເຊິ່ງວິກິດການລະບາດໃຫຍ່ຂອງເຊື້ອພະຍາດ ໂຄວິດ-19 ບໍ່ພຽງແຕ່ກະຈາຍໄປທົ່ວທຸກມູມໂລກເທົ່ານັ້ນ ຫາກຍັງມີການຮັກສາການແຜ່ລະບາດທີ່ເພີ່ມຂຶ້ນໃນເຂດຕາເວັນອອກສູ່ເຂດຕາເວັກຕົກ ແກ່ຍາວເຂົ້າເຖິງສາມປີແລ້ວ ໂດຍໃນຄະນະນີ້ວັນທີ່ 8 ມິຖຸນາ 2021 ທົ່ວໂລກມີຜູ້ຕິດເຊື້ອໂຄວິດ-19 ທັງໝົດ 159,567,811 ຄົນ, ປິ່ນປົວຫາຍດີ 133,687,311 ຄົນ ແລະ ເສຍຊີວິດ 3,263,696 ຄົນ. (ກະຊວງສາທາລະນະສຸກ, 2021).

ໃນກໍລະນີຂອງປະເທດລາວເຮົາໄດ້ພົບຜູ້ປ່ວຍຕິດເຊື້ອກໍລະນີທຳອິດ ເມື່ອວັນທີ່ 21 ມີນາ 2020 ເປັນຄົນລາວ ທີ່ຮັບເຊື້ອມາຈາກການລະບາດໃນ ປະເທດໄທ ແລະ ໄດ້ເດີນທາງມາ ປະເທດລາວ ເຊິ່ງໃນປັດຈຸບັນ ສປປ ລາວ ມີຜູ້ຕິດເຊື້ອສະສົມທັງໝົດ 1,968 ຄົນ, ປິ່ນປົວຫາຍດີ 1720 ຄົນ ແລະ ເສຍຊີວິດ 3 ຄົນ (ກະຊວງສາທາລະນະສຸກ, 2020). ສະນັ້ນ,ໃນທ່າມກາງການແຜ່ລະບາດເຊື້ອພະຍາດໂຄວິດ-19 ທີ່ແຜ່ຫຼາຍ ແລະ ຮຸນແຮງໃນທົ່ວປະເທດນີ້ ປະຊາຊົນລາວເຮົາ ອາດຫຼີກລ້ຽງບໍ່ໄດ້ເຖິງຜົນກະທົບທາງດ້ານເສດຖະກິດ, ທຸລະກິດ, ການສຶກສາ ແລະ ທາງດ້ານສຸຂະພາບ ເຊິ່ງເປັນເງື່ອນໄຂເຮັດໃຫ້ທຸກຄົນຕ້ອງມີການປັບປ່ຽນການດຳລົງຊີວິດ ເພື່ອສ້າງຄວາມປອດໄພປ້ອງກັນຕົວເອງ ເພື່ອໃຫ້ມີຊີວິດລອດ ແລະ ຫຼຸດການແຜ່ກະຈາຍເຊື້ອພະຍາດ ເຊິ່ງຈະເຫັນໄດ້ວ່າທຸກຄົນຕ້ອງມີການປັບຕົວເອງຫຼາຍໆ ຢ່າງໃນການດຳລົງຊີວິດ ແລະ ການເບິ່ງແຍງຕົນເອງດ້ວຍການປັບປ່ຽນພຶດຕິກຳໃນການດຳລົງຊີວິດທີ່ປ່ຽນໄປຈາກພຶດຕິກຳເກົ່າຂອງຕົນໂດຍການເສີມສ້າງ, ປັບປຸງຊອກຫາວິທີການດຳລົງຊີວິດແບບໃໝ່ ເພື່ອໃຫ້ປອດໄພຈາກການຕິດເຊື້ອຄວບຄູ່ໄປພ້ອມກັບຄວາມພະຍາຍາມຮັກສາ ແລະ ຟື້ນຟູສັກກະຍະພາບທາງດ້ານເສດຖະກິດ, ການສຶກສາຄົ້ນຄວ້າຮໍ່າຮຽນ, ການບັນເທີງ/ທ່ອງທ່ຽວ ແລະອື່ນໆ ເຊິ່ງສິ່ງເຫຼົ່ານີ້ອາດເປັນຄວາມເປັນປົກກະຕິແບບໃໝ່ຂອງການດຳລົງຊີວິດ ເມື່ອເວລາຜ່ານໄປຈົນເຮັດໃຫ້ເຮົາເກີດເປັນຄວາມຄຸ້ນເຄີຍ ແລະ ກໍ່ກາຍເປັນສ່ວນໜຶ່ງຂອງການໃຊ້ຊີວິດຂອງຜູ້ຄົນໃນສັງຄົມ.

ເຊິ່ງສິ່ງຕ່າງໆ ທີ່ເຮົາປັບປ່ຽນປະຕິບັດກັນໃນຊ່ວງການແຜ່ລະບາດຂອງເຊື້ອໂລກ ໂຄວິດ-19 ນີ້ ອາດຈະກາຍເປັນບັນທັດຖານໃໝ່ໃນການດຳລົງຊີວິດຂອງພວກເຮົາ (New Normal) ເຖິງແມ່ນວ່າເຫດການເຫຼົ່ານີ້ອາດຈະສິ້ນສຸດລົງໄປແລ້ວ ເປັນຕົ້ນແມ່ນວິທີການປ້ອງກັນການແຜ່ລະບາດຂອງເຊື້ອພະຍາດທີ່ຖືກຕ້ອງວິທີ, ມາດຕະການການເຮັດວຽກຢູ່ບ້ານ (Work from home) ທີ່ໄດ້ມີການປະຕິບັດກັນໃນປັດຈຸບັນນີ້ ເນື່ອງຈາກມີການແຜ່ລະບາດຂອງເຊື້ອພະຍາດທີ່ຮຸນແຮງຂຶ້ນ ເຊິ່ງລວມໄປເຖິງການທີ່ສະຖາບັນການສຶກສາ ເຊັ່ນ: ໂຮງຮຽນ, ວິທະຍາໄລ ແລະ ມະຫາວິທະຍາໄລ ຕ້ອງໄດ້ປ່ຽນມາສອນຜ່ານຊ່ອງທາງອອນລາຍ ຫຼື ຈາກທີ່ຄົນເຮົາມັກໄປຊື້ເຄື່ອງຂອງຈາກຫ້າງຊັບພະສິນຄ້າ , ຕະຫຼາດທົ່ວໄປ, ຮ້ານຄ້າສະດວກຊື້ ແຕ່ຈາກເຫດການການແຜ່ລະບາດນີ້ ກໍ່ເຮັດໃຫ້ພວກເຮົາຕ້ອງໄດ້ທົດລອງສັ່ງເຄື່ອງຂອງໃຫ້ມາສົ່ງຮອດເຮືອນຂອງຕົນແທນ ຫຼື ຈາກການມັກໄປກິນເຂົ້າຮ້ານອາຫານກໍ່ປ່ຽນມາເປັນການສັ່ງຊື້ອາຫານຜ່ານຊ່ອງທາງອອນລາຍມາກິນຢູ່ເຮືອນແທນ ແລະ ເຖິງວ່າເຫດການນີ້ຈະສິ້ນສຸດລົງໃນອະນາຄົດແລ້ວຄົນເຮົາກໍ່ອາດຈະຄຸ້ນເຄີຍກັບສິ່ງເຫຼົ່ານີ້ ຈົນເຮັດໃຫ້ເກີດເປັນພຶດຕິກຳໃໝ່

ເກີດຂຶ້ນ ທີ່ຈະສາມາດເຮັດໃຫ້ເຮົາທຸກຄົນສາມາດຢູ່ຮ່ວມກັນໄດ້ຢ່າງລະມັດລະວັງ ແລະ ປອດໄພຈາກເຊື້ອພະຍາດໂຄວິດ-19 ແລະ ທັງເປັນດ້ານການປະຕິບັດທີ່ຕ້ອງເຮັດ ເພື່ອສ້າງໂອກາດອະນາຄົດທຸກຢ່າງຕ້ອງມີຂອບໃນການປະຕິບັດທັງໃນລະບົບຊີວິດ ແລະ ການເຮັດວຽກ ເຊິ່ງເຮົາເອີ້ນວ່າການໃຊ້ຊີວິດປົກກະຕິແບບໃໝ່ (New Normal) (ກະຊວງສາທາລະນະສຸກແຫ່ງປະເທດໄທ, 2020).

ຈາກເຫດຜົນຂ້າງເທິງນີ້ຈຶ່ງເຮັດໃຫ້ຄະນະຜູ້ຄົ້ນຄວ້າມີຄວາມສົນໃຈສຶກສາເຖິງທັດສະນະຄະຕິຂອງ ປະຊາຊົນລາວທີ່ມີຕໍ່ການໃຊ້ວິຖີຊີວິດປົກກະຕິແບບໃໝ່ ໃນຊ່ວງການແຜ່ລະບາດພະຍາດ Covid-19 ເພື່ອຮັບຮູ້ເຖິງຂໍ້ມູນກ່ຽວກັບລະດັບຄວາມຮູ້ ຄວາມເຂົ້າໃຈຂອງປະຊາຊົນຕໍ່ການແຜ່ລະບາດພະຍາດໂຄວິດ-19, ພຶດຕິກໍາການປ້ອງກັນຕົນເອງຈາກເຊື້ອພະຍາດໂຄວິດ-19 ແລະ ຄວາມຄິດເຫັນຕໍ່ການເສີມສ້າງວິຖີການໃຊ້ຊີວິດແບບໃໝ່ຂອງປະຊາຊົນລາວທີ່ປອດໄພຈາກເຊື້ອພະຍາດໂຄວິດ-19 ໂດຍຂໍ້ມູນທີ່ໄດ້ຈາກການສຶກສາຄົ້ນຄວ້າສາມາດໃຊ້ເປັນຂໍ້ມູນພື້ນຖານເພື່ອສົ່ງເສີມວຽກງານປ້ອງກັນພະຍາດໂຄວິດ-19 ຂອງພາກສ່ວນທີ່ກ່ຽວຂ້ອງໄດ້ໃນອະນາຄົດ. ການຄົ້ນຄວ້າວິໄຈໃນຄັ້ງນີ້ແມ່ນມີຈຸດປະສົງໃນການຄົ້ນຄວ້າດັ່ງນີ້:

1) ເພື່ອສຶກສາຄວາມຮູ້ຄວາມເຂົ້າໃຈຂອງປະຊາຊົນລາວຕໍ່ກັບພະຍາດໂຄວິດ-19 (Covid-19).

2) ເພື່ອສຶກສາພຶດຕິກໍາການປະຕິບັດຕົວຂອງປະຊາຊົນລາວຕໍ່ການປ້ອງກັນພະຍາດໂຄວິດ-19.

3) ຄວາມຄິດເຫັນຂອງປະຊາຊົນລາວຕໍ່ການໃຊ້ຊີວິດປົກກະຕິໃນຊ່ວງທີ່ມີການແຜ່ລະບາດຂອງພະຍາດໂຄວິດ-19.

## 2. ອຸປະກອນ ແລະ ວິທີການ

### 2.1 ອຸປະກອນໃນການເກັບຂໍ້ມູນ

ອຸປະກອນທີ່ໃຊ້ໃນການຄົ້ນຄວ້າວິໄຈຄັ້ງນີ້ແມ່ນແບບສອບຖາມ ເຊິ່ງມີລັກສະນະເປັນແບບຊ່ວງປະມານຄ່າ (Rating Scale) ແບ່ງອອກເປັນ 5 ລະດັບ ຕາມວິທີຂອງ Likert Scales ໂດຍມີຄ່າຄວາມໜ້າເຊື່ອຖືເທົ່າກັບ 0.922 ໂດຍໄດ້ມີການສຸ່ມຕົວຢ່າງທາງອອນລາຍ ຈາກ google form.

### 2.2 ວິທີການຄົ້ນຄວ້າ

ເປັນການຄົ້ນຄວ້າແບບປະລິມານ (Quantitative Research) ດໍາເນີນການຄົ້ນຄວ້າໂດຍການກໍານົດປະຊາກອນແມ່ນປະຊາຊົນລາວທີ່ດໍາລົງຊີວິດພາຍໃນປະເທດລາວ ປີ 2021 ແລະ ກຸ່ມຕົວຢ່າງທີ່ໃຊ້ໃນການສໍາຫຼວດທັງໝົດມີຈໍານວນ 690 ຄົນ, ເມື່ອໄດ້ຂໍ້ມູນຈາກການລົງເກັບກໍາແລ້ວໄດ້ນໍາເອົາຂໍ້ມູນດັ່ງກ່າວມາດໍາເນີນການວິເຄາະຊອກຫາຄ່າທາງສະຖິຕິຕ່າງໆ ເຊັ່ນ: ຄ່າຄວາມຖີ່, ຄ່າສ່ວນຮ້ອຍ, ຄ່າສະເລ່ຍ (Mean), ຄ່າຜັນປ່ຽນມາດຕະຖານ (Std. Deviation), ດ້ວຍໂປຼແກມສໍາເລັດຮູບທາງຄອມພິວເຕີ ເພື່ອວິເຄາະຕາມຈຸດປະສົງຂອງການຄົ້ນຄວ້າ ໂດຍມີລາຍລະອຽດດັ່ງລຸ່ມນີ້:

1) ດ້ານລະດັບຄວາມຮູ້ຄວາມເຂົ້າໃຈຂອງປະຊາຊົນລາວຕໍ່ກັບພະຍາດໂຄວິດ-19 (Covid-19) ແລະ ຂໍ້ມູນດ້ານພຶດຕິກໍາການປະຕິບັດຕົວຂອງປະຊາຊົນລາວຕໍ່ການປ້ອງກັນພະຍາດໂຄວິດ-19 ແມ່ນໄດ້ວິເຄາະຂໍ້ມູນດ້ວຍສະຖິຕິພັນລະນາ ໂດຍການວິເຄາະຫາ ຄ່າຄວາມຖີ່ ແລະ ຄ່າສ່ວນຮ້ອຍ ແລະ ມີການຈັດລຽງ, ຕີຄວາມໝາຍເນື້ອໃນ ແລະ ສະຫຼຸບຂໍ້ມູນເພື່ອໃຫ້ສອດຄ່ອງຕາມຈຸດປະສົງທີ່ສຶກສາ.

2) ການວິເຄາະຂໍ້ມູນຄວາມຄິດເຫັນຂອງປະຊາຊົນລາວຕໍ່ການໃຊ້ຊີວິດປົກກະຕິໃນຊ່ວງທີ່ມີການແຜ່ລະບາດຂອງພະຍາດໂຄວິດ-19 ແມ່ນວິເຄາະຂໍ້ມູນດ້ວຍສະຖິຕິພັນລະນາ ເຊິ່ງຄະນະຜູ້ວິໄຈໄດ້ວິເຄາະຂໍ້ມູນດ້ວຍສະຖິຕິພັນລະນາ ໂດຍການວິເຄາະຫາຄ່າສະເລ່ຍ (Mean) ແລະ ຄ່າຜັນປ່ຽນມາດຕະຖານ (Std. Deviation) ແລະ ໄດ້ມີການຈັດລຽງ, ໄຈ້ແຍກ, ຕີຄວາມໝາຍເນື້ອໃນ ແລະ ສະຫຼຸບຂໍ້ມູນເພື່ອໃຫ້ສອດຄ່ອງຕາມຈຸດປະສົງທີ່ສຶກສາ.

## 3. ຜົນໄດ້ຮັບ (Result)

### 3.1 ລະດັບຄວາມຮູ້ຄວາມເຂົ້າໃຈຂອງປະຊາຊົນລາວຕໍ່ກັບພະຍາດໂຄວິດ-19

ປະຊາຊົນລາວທັງໝົດ 690 ຄົນແມ່ນເປັນຜູ້ທີ່ຮູ້ຈັກກັບພະຍາດໂຄວິດ-19 ແລະ ໂດຍລວມແມ່ນປະຊາຊົນລາວມີຄວາມຮູ້ຄວາມເຂົ້າໃຈໃນລະດັບສູງຫຼາຍ ຕໍ່ກັບການແຜ່ລະບາດຂອງພະຍາດໂຄວິດ-19 (Covid-19) (ຕອບໄດ້ຖືກຕ້ອງສະເລ່ຍເທົ່າກັບ 91.6%) ໃນນີ້ປະຊາຊົນລາວມີຄວາມຮູ້ຄວາມເຂົ້າໃຈໃນລະດັບສູງຫຼາຍ ກ່ຽວກັບເຊື້ອພະຍາດໂຄວິດ-19 (ສາມາດຕອບໄດ້ຖືກຕ້ອງ 88.6%) ເຊິ່ງປະຊາຊົນລາວມີຄວາມຮູ້ຄວາມເຂົ້າໃຈທີ່ຖືກຕ້ອງກ່ຽວກັບ ອາການປ່ວຍຕິດເຊື້ອຂອງພະຍາດໂຄວິດ 19 (96.8% ), ພາຫະນະໃນການແຜ່ເຊື້ອພະຍາດໂຄວິດ-19 (95.7%), ໄລຍະຟັກຕົວຂອງເຊື້ອໂລກໂຄວິດ 19 (96.7%), ຜູ້ສໍາພັດກັບເຊື້ອພະຍາດໂຄວິດ 19 (96.7), ຄວາມສາມາດຢູ່ລອດມີຊີ ວິດຂອງເຊື້ອພະຍາດໂຄວິດ-19 (85.9%), ແຫຼ່ງກໍາເນີດຂອງໂລກພະຍາດໂຄວິດ 19 (95.2%), ພະຍາດໂຄວິດ-19 (90%) ແລະ ຂັ້ນຕອນຂອງການຮັບເຊື້ອພະຍາດໂຄວິດ 19 (84%).

ປະຊາຊົນລາວຍັງມີຄວາມຮູ້ຄວາມເຂົ້າໃຈໃນລະດັບສູງຫຼາຍ ຕໍ່ກັບການປ້ອງກັນເຊື້ອພະຍາດໂຄວິດ-19 (ສາມາດຕອບຄໍາຖາມໄດ້ຖືກຕ້ອງສະເລ່ຍ 94.6%) ເຊິ່ງປະຊາຊົນລາວ ມີຄວາມຮູ້ຄວາມເຂົ້າໃຈທີ່ຖືກຕ້ອງກ່ຽວກັບການຫຼີກລ້ຽງການໄປສະຖານທີ່ແອອັດ, ບ່ອນຊຸມຊົນ ແລະ ຮັກສາໄລຍະຫ່າງຈາກຄົນອື່ນ ຢ່າງໜ້ອຍ 1-2 ແມັດ (99.3 %), ການໃສ່ຜ້າອັດປາກ ແລະ ອັດດັງທຸກຄັ້ງທີ່ມີການອອກໄປຂ້າງນອກບ້ານ ແລະ ເມື່ອກັບມາບ້ານຕ້ອງລ້າງມື, ອາບນໍ້າ ແລະ ປ່ຽນເສື້ອຜ້າທັນທີ ເພື່ອປ້ອງກັນເຊື້ອພະຍາດ (99.1%), ການງົດອອກຈາກບ້ານເພື່ອຢຸດການແຜ່ລະບາດຂອງພະຍາດໂຄວິດ- 19 (99%), ຂ້າເຊື້ອພະຍາດດ້ວຍການລ້າງມືດ້ວຍສະບູ ແລະ ເຈວທີ່ມີສ່ວນປະສົມເຫຼົ້າເກົ້າສິບ (98.7%), ການຂ້າເຊື້ອພະບາດໂຄວິດ-19 ທີ່ຖືກຕ້ອງດ້ວຍນໍ້າຢາຂ້າເຊື້ອ (98.1%) ແລະ ການປ້ອງກັນເຊື້ອພະຍາດດ້ວຍການໃສ່ໜ້າກາກອະນາໄມອັດປາກ - ອັດດັງ (97.2%), ແຫຼ່ງຂໍ້ມູນທີ່ຖືກຕ້ອງທີ່ສາ ມາດກວດສອບ ຂໍ້ມູນກ່ຽວກັບພະຍາດໂຄວິດ 19 ແລະ ຂໍ້ມູນກ່ຽວກັບການສັກວັກຊີນ (96.5%), ເມື່ອຈະມີການສໍາພັດຕາ, ໃບໜ້າ ແລະ ປາກທຸກຄັ້ງຕ້ອງລ້າງມືດ້ວຍສະບູ ຫຼື ລ້າງດ້ວຍເຈວທີ່ມີສ່ວນປະສົມຂອງເຫຼົ້າເກົ້າສິບ (94.8%).

ນອກຈາກນີ້ ປະຊາຊົນລາວຍັງມີຄວາມຮູ້ຄວາມເຂົ້າໃຈທີ່ຜິດກ່ຽວກັບ ອັນຕະລາຍຂອງສາຍພັນແຕ່ລະສາຍພັນຂອງໄວລັດ ພະຍາດໂຄວິດ-19 ໂດຍສາມາດຕອບຄໍາຖາມໄດ້ຖືກຕ້ອງພຽງແຕ່ 56.7% ແລະ ຄວາມຮູ້ເຂົ້າໃຈກ່ຽວກັບການສັກວັກຊີນ SARS-CoV-2 ແມ່ນສາມາດປ້ອງກັນການແຜ່ລະບາດພະຍາດໂຄວິດ-19 ໄດ້ ແມ່ນສາມາດຕອບຄໍາຖາມໄດ້ຖືກຕ້ອງ 69.1%.

### 3.2 ຂໍ້ມູນດ້ານພຶດຕິກໍາການປະຕິບັດຕົວຂອງປະຊາຊົນລາວຕໍ່ການປ້ອງກັນພະຍາດໂຄວິດ-19

ຜົນການສຶກສາດ້ານພຶດຕິກໍາການປະຕິບັດຕົວຂອງປະຊາຊົນລາວຕໍ່ການປ້ອງກັນພະຍາດໂຄວິດ-19 ພົບວ່າ: ປະຊາຊົນລາວສ່ວນຫຼາຍຮູ້ຈັກຂໍ້ມູນກ່ຽວກັບພະຍາດໂຄວິດ-19 ແລະ ວິທີການປ້ອງກັນເຊື້ອໂລກໂຄວິດ-19 ໄດ້ຈາກຊ່ອງທາງສື່ສັງຄົມອອນລາຍ ເຊັ່ນ: Facebook, We-chat, whatsaap....(83.3%), ຮອງລົງມາແມ່ນຮູ້ຈາກສື່ສໍານັກຂ່າວຂອງອົງການທີ່ກ່ຽວຂ້ອງຂອງປະເທດລາວ (73.2%), ເປັນຜູ້ທີ່ມີຄວາມສາມາດໃນການຮັບຮູ້, ຄົ້ນຫາ ແລະ ເຂົ້າເຖິງແຫຼ່ງຂໍ້ມູນຂໍ້ມູນກ່ຽວກັບພະຍາດໂຄວິດ-19 ໄດ້ທັນທີ ແລະ ທັນສະໄໝ (66.2%) ແລະ ເປັນຜູ້ທີ່ມີການປະຕິບັດຕົນໃນການໃຊ້ຊີວິດປົກກະຕິໃນຊ່ວງການແຜ່ລະບາດພະຍາດໂຄວິດ-19 ໄດ້ດີຫຼາຍ ແມ່ນການປະຕິບັດຕົນຄື: ການໃສ່ຜ້າອັດປາກອັດດັງ (ໃສ່ Mas) ເມື່ອອອກຈາກບ້ານ (94.3%), ຮອງລົງມາແມ່ນການຫຼີກລ້ຽງການເຂົ້າໄປໃກ້ກຸ່ມສ່ຽງ ຫຼື ຜູ້ທີ່ມີອາການປ່ວຍ (93.9%), ມີການຫຼີກລ້ຽງການສໍາພັດກັບຜູ້ອື່ນໆ ເຊັ່ນ: ບໍ່ທັກທາຍດ້ວຍການຈັບມື, ການກອດກັນ (86.1%), ມີການລ້າງມືທຸກຄັ້ງດ້ວຍເຈວທີ່ມີເຫຼົ້າເກົ້າສິບປະສົມເມື່ອມີການຈັບບາຍສິ່ງຂອງໃນທີ່ສາທາລະນະ ເຊັ່ນ: ຮາວຂັ້ນໄດ, ມືຈັບລູກປິດປະຕູ, ໂຕະ-ຕັ່ງນັ່ງ (72.3%), ຮັບປະທານອາຫານທີ່ມີປະໂຫຍດຫຼີກລ້ຽງການຮັບປະທານອາຫານດິບເຊັ່ນ:

ຊີ້ນດິບ, ເລືອດດິບ (72.2%) ແລະ ພຶດຕິກຳທີ່ສາມາດປະຕິບັດໄດ້ດີໃນລະດັບປານກາງຄື: ເວລາກັບມາຮອດບ້ານແມ່ນຮີບຟ້າວລ້າງມື, ອາບນ້ຳ ແລະ ປ່ຽນເສື້ອຜ້າທັນທີ (68.4%), ພົກເຈວລ້າງມື ແລະ ນ້ຳຢາຂ້າເຊື້ອທີ່ມີສ່ວນປະສົມຂອງເຫຼົ້າ 90 ຕິດຕົວເມື່ອທ່ານອອກຈາກບ້ານ (62.2%), ການເວັ້ນໄລຍະຫ່າງຈາກບຸກຄົນອື່ນ 1 - 2 ແມັດ ເມື່ອອອກຈາກບ້ານ (60.7%), ຫຼີກລ້ຽງການຈັບສິ່ງຂອງສາທາລະນະ ເຊັ່ນ: ຮາວຂຶ້ນຂັ້ນໄດ, ຂໍລົດສາທາລະນະ, ມືຈັບລູກບິດປະຕູ, ໂຕະ ຕັ່ງນັ່ງ (56.8%).

ສຳລັບພຶດຕິກຳທີ່ຖືວ່າປະຕິບັດໄດ້ອ່ອນຫຼາຍແມ່ນການປະຕິບັດກ່ຽວກັບທຳຄວາມສະອາດສິ່ງຂອງເຄື່ອງ ໃຊ້ເຊັ່ນ: ໂຕະເຮັດວຽກ, ເຄື່ອງໃຊ້ສ່ວນຕົວ, ໂທລະສັບມືຖືດ້ວຍນ້ຳຢາຂ້າເຊື້ອທຳຄວາມສະອາດ ຫຼື ເຫຼົ້າເກົ້າສິບ (48.4%), ອອກກຳລັງການສະໝ່ຳສະເໝີ ແລະ ພັກຜ່ອນພຽງພໍ (43.9%) ແລະ ເວລາຊື້ສິນຄ້າດ້ວຍການ ຊຳລະດ້ວຍເງິນໂອນ ຫຼື ບໍລິການຜ່ານແອັບມືຖືທາງການເງິນແມ່ນປະຕິບັດພຽງ (33.5%), ລະດັບການປ້ອງກັນຕົວຈາກເຊື້ອພະຍາດໂຄວິດ 19 ຂອງປະຊາຊົນລາວ ໂດຍລວມແມ່ນຢູ່ໃນລະດັບດີ (ຄ່າສະເລ່ຍເທົ່າ 4.17).

### 3.3 ຄວາມຄິດເຫັນຂອງປະຊາຊົນລາວຕໍ່ການໃຊ້ຊີວິດປົກກະຕິໃນຊ່ວງທີ່ມີການແຜ່ລະບາດຂອງພະຍາດໂຄວິດ-19

ຜົນການສຶກສາດ້ານຄວາມຄິດເຫັນຂອງປະຊາຊົນລາວຕໍ່ການໃຊ້ຊີວິດປົກກະຕິໃນຊ່ວງທີ່ມີການແຜ່ລະບາດຂອງພະຍາດໂຄວິດ-19 ບໍ່ວ່າຈະເປັນດ້ານການກິນຢູ່ພັກເຊົາ, ການເດີນທາງໄປມາ, ການເຮັດວຽກ ເພື່ອປ້ອງກັນໂຄວິດເຊິ່ງຜົນການສຶກສາອັນດັບທຳອິດພົບວ່າ: ປະຊາຊົນລາວມີຄວາມຄິດເຫັນວ່າໜ້າກາກອະນາໄມທີ່ໃຊ້ປິດປາກ-ປິດດັງ ແລະ ເຈວລ້າງມືທີ່ມີສ່ວນປະສົມຂອງເຫຼົ້າເກົ້າສິບແມ່ນສາມາດເປັນອຸປະກອນທີ່ຊ່ວຍໃນການປ້ອງກັນຕົວເອງຈາກເຊື້ອພະຍາດໂຄວິດ-19 ໄດ້ ແລະ ເປັນອຸປະກອນທີ່ສາມາດຢຸດການກະຈາຍເຊື້ອໄປສູ່ບຸກຄົນອື່ນໄດ້ ($\overline{X}$ = 4.70 ), ອັນດັບທີສອງແມ່ນປະຊາຊົນມີຄວາມຄິດເຫັນວ່າຕົນເອງແມ່ນມີການຫຼີກລ້ຽງການສຳພັດກັບບຸກຄົນອື່ນໂດຍບໍ່ຈຳເປັນ ($\overline{X}$ = 4.64), ອັນດັບທີ 3 ແມ່ນມີຄວາມຄິດເຫັນວ່າຕົນເອງແມ່ນໃຫ້ຄວາມສຳຄັນໃນການຮັກສາໄລຍະຫ່າງກັບບຸກຄົນອື່ນຕໍ່ໄປເຖິງວ່າພະຍາດໂຄວິດ-19 ($\overline{X}$= 4.53), ອັນດັບທີ 4 ແມ່ນປະຊາຊົນລາວຖືວ່າເຕັກໂນໂລຊີ, ດີຈິຕອນທີ່ມີໃນປັດຈຸບັນແມ່ນມີຄວາມສຳຄັນຕໍ່ການດຳລົງຊີວິດຂອງຕົນເອງຫຼາຍຂຶ້ນ ແລະ ຕົນເອງກໍ່ເປັນບຸກຄົນທີ່ສາມາດໃຊ້ງານເຄື່ອງມືດີຈິຕອນ ແລະ ອຸປະກອນໄອທີເຫຼົ່ານັ້ນໄດ້ຢ່າງຄຸ້ນເຄີຍ ແລະ ຊຳນານຫຼາຍຂຶ້ນ ($\overline{X}$= 4.48), ອັນດັບທີ 5 ແມ່ນຕົນເອງຈະຫຼີກລ້ຽງການອອກໄປຕິດຕໍ່ຜູ້ຄົນຢູ່ພາຍນອກ ແຕ່ຈະຫັນມາໃຫ້ຄວາມສຳຄັນໃນການຕິດຕໍ່ກັບບຸກຄົນອື່ນດ້ວຍຊ່ອງທາງອິນເຕີເນັດ ($\overline{X}$= 4.47), ອັນດັບທີ 6 ແມ່ນປະຊາຊົນລາວມີຄວາມຄິດເຫັນວ່າໜ້າກາກອະນາໄມທີ່ໃຊ້ປິດປາກ ປິດດັງ ແລະ ເຈວລ້າງມືທີ່ມີສ່ວນປະສົມຂອງເຫຼົ້າເກົ້າສິບເປັນສິ່ງທີ່ທຸກຄົນຕ້ອງການ ແລະ ເປັນສິ່ງທີ່ມີການຊົມໃຊ້ກັນຫຼາຍຂຶ້ນຈົນກາຍເປັນເລື່ອງປົກກະຕິຂອງຕົນ ($\overline{X}$= 4.46), ອັນດັບທີ 7 ແມ່ນການຫັນມາເຮັດວຽກຢູ່ບ້ານ (work from home) ແລະ ເປັນສິ່ງໄດ້ຮັບນະໂຍບາຍຈາກອົງກອນ ($\overline{X}$ = 4.22), ອັນດັບທີ 8 ແມ່ນປະຊາຊົນຈະໃຫ້ຄວາມສຳຄັນ ແລະ ຫຼີກລ້ຽງການຈັບ ແລະ ຖືເງິນສົດ ໂດຍຈະໃຊ້ບໍລິການຜ່ານທາງແອັບບໍລິການທາງການເງິນເວລາມີການຊຳລະສິນຄ້າ ຫຼື ມີການຮັບ ຊຳລະສິນຄ້າ ($\overline{X}$= 4.07), ອັນດັບທີ 9 ແມ່ນຕົນເອງຈະຫຼີກລ້ຽງການໄປຊື້ສິນຄ້າທີ່ຕະຫຼາດ, ຮ້ານຄ້າສະດວກຊື້, ຮ້າງຊັບພະສິນຄ້າ ໂດຍການຊື້ສິນຄ້າຜ່ານທາງອອນລາຍ ແລະ ມີການສົ່ງສິນຄ້າເຖິງເຮືອນ ($\overline{X}$= 3.95) ແລະ ອັນດັບສຸດທ້າຍແມ່ນປະຊາຊົນຖືວ່າເຄື່ອງມືອຸປະກອນດີຈິຕອນ ແລະ ເຄື່ອງເຕັກໂນໂລຊີທີ່ມີໃນປັດຈຸບັນແມ່ນ ກາຍເປັນເລື່ອງປົກກະຕິໃນການໃຊ້ຊີວິດຂອງຕົນເອງເຊັ່ນ: ການເຮັດວຽກຢູ່ບ້ານ, ການສັ່ງຊື້ສິນຄ້າສົ່ງເຖິງໜ້າເຮືອນ, ການບໍລິການສົ່ງສິນຄ້າ ຫຼື ການຮຽນອອນລາຍ ແລະ ອື່ນໆ ($\overline{X}$= 4.39).

ດ້ານສຸຂະພາບ ຫຼື ການເບິ່ງແຍງຕົນເອງເພື່ອປ້ອງກັນພະຍາດໂຄວິດ-19 ຜົນການສຶກສາພົບວ່າ: ອັນດັບທີ 1 ແມ່ນປະຊາຊົນລາວໄດ້ຫຼຸດຜ່ອນການອອກໄປພົບປະຜູ້ຄົນໃນສັງຄົມ ແລ້ວຫັນມາໃຊ້ວັກຊີນ ແລະ ເຮັດວຽກຢູ່ບ້ານ ແລະ ມີເວລາໃຫ້ຄອບຄົວຫຼາຍຂຶ້ນ ($\overline{X} = 4.53$), ອັນດັບທີ 2 ແມ່ນປະຊາຊົນລາວຫັນມາໃຫ້ຄວາມສຳຄັນໃນການຮັບປະທານອາຫານທີ່ມີປະໂຫຍດຕໍ່ສຸຂະພາບ, ມີຄວາມປອດໄພ ແລະ ມີຄວາມສະອາດ ໂດຍເນັ້ນບໍລິໂພກອາຫານທີ່ມາຈາກທຳມະຊາດ ຫຼື ສິນຄ້າອໍແກນິກຫຼາຍຂຶ້ນ ($\overline{X} = 4.39$) ແລະ ລຳດັບສຸດທ້າຍແມ່ນ ປະຊາຊົນລາວຫັນມາອອກກຳລັງກາຍຫຼາຍຂຶ້ນ, ຫັນມາເບິ່ງແຍງສຸຂະພາບຕົນເອງ, ໃສ່ໃຈຕົນເອງ ແລະ ຮັກສາຕົນເອງຫຼາຍຂຶ້ນ ແລະ ສຸຂະພາບຂອງຄອບຄົວຫຼາຍຂຶ້ນ ($\overline{X} = 4.35$).

ດ້ານເສດຖະກິດ ຜົນການສຶກສາພົບວ່າ: ອັນດັບທີ 1 ແມ່ນປະຊາຊົນລາວຈະມີລະບຽບວິໄນໃນການໃຊ້ເງິນຂອງຕົນເອງຫຼາຍຂຶ້ນ, ຄຳນຶງເຖິງການໃຊ້ຈ່າຍເງິນ ເຊັ່ນ: ມີການຫຼຸດຜ່ອນຄ່າໃຊ້ຈ່າຍ ໂດຍການຕັດການຊື້ສິນຄ້າທີ່ບໍ່ຈຳເປັນອອກໄປ ເປັນຕົ້ນແມ່ນສິນຄ້າຟູມເຟືອຍຄື: ນ້ຳຫອມ, ກະເປົາ, ເກີບ ແລະ ອື່ນໆ ($\overline{X} = 4.37$), ອັນດັບທີ 2 ແມ່ນປະຊາຊົນລາວໄດ້ຫັນມາໃຫ້ຄວາມສຳຄັນຕໍ່ການອອມເງິນຂອງຕົນເອງໃນອະນາຄົດຫຼາຍຂຶ້ນ ແລະ ປະຊາຊົນລາວ ໄດ້ມີຄວາມສົນໃຈລົງທຶນໃນຕະຫຼາດຫຸ້ນຂອງຕະຫຼາດຫຼັກຊັບແຫ່ງຊາດລາວຫຼາຍຂຶ້ນ ($\overline{X} = 3.46$ ເທົ່າກັນ) ແລະ ລຳດັບສຸດທ້າຍແມ່ນປະຊາຊົນລາວໄດ້ຫັນມາໃຫ້ຄວາມສຳຄັນ ແລະ ສົນໃຈລົງທຶນໃນຕະຫຼາດທອງຄຳຫຼາຍຂຶ້ນ ($\overline{X} = 3.42$).

ສຳລັບດ້ານທຸລະກິດ ພົບວ່າ: ບັນດາຮ້ານຄ້າທີ່ປະຊາຊົນລາວ ໄປຕ້ອງມີຈຸດກັ່ນກອງ ແລະ ມີເຈວແອວກໍຮໍອະນາໄມມືກ່ອນເຂົ້າຮ້ານ ($\overline{X} = 4.56$) ແລະ ສຳລັບການບໍລິການທາງການແພດຕ້ອງມີແອບບໍລິການດ້ານບໍລິການສຸຂະພາບເປັນບໍລິການພື້ນຖານ ເພື່ອໃຊ້ໃນການຮັບລົງທະບຽນບັດຄິວເຂົ້າໃຊ້ບໍລິການ ແລະ ລາຍງານອາການເຈັບປ່ວຍຂັ້ນພື້ນຖານ ($\overline{X} = 4.51$).

ໂດຍລວມແລ້ວທັດສະນະຄະຕິຂອງປະຊາຊົນລາວທີ່ມີຕໍ່ການໃຊ້ວິຖີຊີວິດປົກກະຕິແບບໃໝ່ ໃນຊ່ວງການແຜ່ລະບາດພະຍາດ Covid-19 ແມ່ນຖືວ່າປະຊາຊົນລາວມີຄວາມຮູ້ ຄວາມເຂົ້າໃຈ ທີ່ຖືກຕ້ອງຫຼາຍທີ່ສຸດຕໍ່ກັບພະຍາດໂຄວິດ-19 ແລະ ແນວທາງການປ້ອງກັນທີ່ຖືກຕ້ອງ, ມີລະດັບພຶດຕິກຳການປ້ອງກັນຕົວເອງຈາກພະຍາດໂຄວິດ-19 ຢູ່ໃນລະດັບທີ່ດີ ແລະ ມີວິຖີໃນການດຳລົງຊີວິດແບບໃໝ່ໃນຊ່ວງການແຜ່ລະບາດຂອງພະຍາດໂຄວິດ-19 ທີ່ປອດໄພ, ຖືກຕ້ອງ ແລະ ເປັນແບບຢ່າງທີ່ດີຕໍ່ບຸກຄົນທົ່ວໄປ.

## 4. ວິພາກຜົນ

ຜົນການຄົ້ນຄວ້າພົບວ່າ: ປະຊາຊົນລາວມີຄວາມຮູ້ຄວາມເຂົ້າໃຈໃນລະດັບສູງຫຼາຍ ກ່ຽວກັບເຊື້ອພະຍາດໂຄວິດ-19, ພາຫະໃນການແຜ່ເຊື້ອໂລກໂຄວິດ-19, ປະຊາຊົນລາວ ຍັງມີຄວາມຮູ້ຄວາມເຂົ້າໃຈໃນລະດັບສູງຫຼາຍ ຕໍ່ກັບການປ້ອງກັນເຊື້ອໂລກໂຄວິດ-19 ໂດຍມີຄວາມຮູ້ທີ່ຖືກຕ້ອງກ່ຽວກັບການໃສ່ຜ້າອັດປາກ-ອັດດັງ, ການຂ້າເຊື້ອພະຍາດໂຄວິດ-19, ການງົດອອກຈາກບ້ານເພື່ອຢຸດການແຜ່ລະບາດຂອງເຊື້ອພະຍາດໂຄວິດ-19 ເຊິ່ງສອດຄ່ອງກັບການສຳຫຼວດຂອງ ປາໂມດ ຖ່າງກະໂທກ (2020) ພົບວ່າ: ປະຊາຊົນຊາວໄທມີຄວາມຮູ້ ຄວາມເຂົ້າໃຈກ່ຽວກັບການປ້ອງກັນການລະບາດໂລກໂຄວິດ-19 ທີ່ຖືກຕ້ອງກ່ຽວກັບການໃສ່ໜ້າກາກອານາໄມຢ່າງຖືກວິທີ ແລະ ມີຄວາມຮູ້ຄວາມເຂົ້າໃຈກ່ຽວກັບການລ້າງມືຢ່າງຖືກວິທີ ແລະ ສອດຄ່ອງກັບ ນັດຖະວັນ ຄຳແສນ (2021) ພົບວ່າ: ຄວາມຮອບຮູ້ດ້ານສຸຂະພາບກ່ຽວກັບການປ້ອງກັນການລະບາດຂອງໂລກຕິດເຊື້ອໄວລັດໂຄໂລນ່າ 2019 ຂອງປະຊາຊົນຊາວໄທ ພົບວ່າ: ປະຊາຊົນຊາວໄທມີຄວາມຮູ້ກ່ຽວກັບການປ້ອງກັນຕົນເອງຈາກການຕິດເຊື້ອໂລກໂຄວິດ-19 ຢູ່ໃນລະດັບຫຼາຍ (ມີຄ່າສະເລ່ຍເທົ່າ 9.44) ແລະ ບົດວິໄຈນີ້ຍັງສອດຄ່ອງກັບການສຶກສາຄວາມຮູ້ ທັດສະນະຄະຕິ ແລະ ການປະຕິບັດກ່ຽວກັບການຕິດເຊື້ອໄວລັດ ໂຄວິດ-19 ຂອງປະຊາຊົນໃນປະເທດມາເລເຊຍ (Azlan, Hamzah, Sern, Ayub, & Mohamad, 2020) ພົບວ່າກຸ່ມຕົວຢ່າງມີຄວາມຮູ້ກ່ຽວກັບ

ການປ້ອງກັນການຕິດເຊື້ອໄວໄລໂຄວິດ-19 ຢູ່ໃນລະດັບສູງ ໂດຍຕອບຄຳຖາມໄດ້ຖືກຕ້ອງ 80.50%.

ຜົນການຄົ້ນຄວ້າດ້ານພຶດຕິກຳການປະຕິບັດຕົວຂອງປະຊາຊົນລາວຕໍ່ການປ້ອງກັນພະຍາດໂຄວິດ-19 ພົບວ່າ: ປະຊາຊົນລາວສ່ວນຫຼາຍເປັນຜູ້ທີ່ມີການປະຕິບັດຕົນໃນການໃຊ້ຊີວິດປົກກະຕິໃນຊ່ວງການແຜ່ລະບາດພະຍາດໂຄວິດ-19 ໄດ້ດີຫຼາຍ ເປັນຕົ້ນແມ່ນການໃສ່ຜ້າອັດປາກອັດດັງ (ໃສ່ Mas) ເມື່ອອອກຈາກບ້ານ, ການຫຼີກລ້ຽງການເຂົ້າໄປໃຫ້ກຸ່ມສ່ຽງ ຫຼື ຜູ້ທີ່ມີອາການປ່ວຍ, ມີການຫຼີກລ້ຽງການສຳພັດກັບຜູ້ອື່ນໆ ເຊັ່ນ: ບໍ່ທັກທາຍດ້ວຍການຈັບມື, ການກອດກັນ , ມີການລ້າງມືທຸກຄັ້ງດ້ວຍເຈວທີ່ມີເຫຼົ້າເກົ້າສິບປະສົມເມື່ອມີການຈັບບາຍສິ່ງຂອງໃນທີ່ສາທາລະນະ ເຊັ່ນ: ຮາວຂັ້ນໄດ, ມືຈັບລູກບິດປະຕູ, ໂຕະ-ຕັ່ງນັ່ງ, ຮັບປະທານອາຫານທີ່ມີປະໂຫຍດຫຼີກລ້ຽງການຮັບປະທານອາຫານດິບ ສອດຄ່ອງກັບການສຶກສາຂອງ ນັດຖະວັນ ຄໍາແສນ (2021) ພົບວ່າພຶດຕິກໍາການປ້ອງກັນການຕິດເຊື້ອໄວລັດໂຄວິດ-19 ແມ່ນໃສ່ຫນ້າກາກອານາໄມເມື່ອອອກຈາກບ້ານທຸກຄັ້ງ ແລະ ສອດຄ່ອງກັບການສຶກສາຂອງ Zhong et al, (2020) ພົບວ່າ ປະຊາຊົນຊາວຈີນມີການປະຕິບັດເພື່ອປ້ອງກັນການຕິດເຊື້ອພະຍາດໂຄວິດ-19 ເປັນຢ່າງດີ ໂດຍສະເພາະແມ່ນການໃສ່ໜ້າກາກອະນາໄມເມື່ອອອກຈາກບ້ານທຸກຄັ້ງໃນຊ່ວງທີ່ມີການແຜ່ລະບາດໃຫຍ່ຂອງໂຄວິດ-19 ໃນສາທາລະນະປະຊາຊົນຈີນ (Zhong et al, 2020).

ຜົນການສຶກສາຄວາມຄິດເຫັນຂອງປະຊາຊົນລາວຕໍ່ການໃຊ້ຊີວິດປົກກະຕິໃນຊ່ວງທີ່ມີການແຜ່ລະບາດຂອງພະຍາດໂຄວິດ-19 ບໍ່ວ່າຈະເປັນດ້ານການກິນຢູ່ພັກເຊົາ, ການເດີນທາງໄປມາ, ການເຮັດວຽກ ເພື່ອປ້ອງກັນໂຄວິດ ພົບວ່າປະຊາຊົນລາວມີຄວາມຄິດເຫັນວ່າໜ້າກາກອະນາໄມທີ່ໃຊ້ປິດປາກ-ປິດດັງ ແລະ ເຈວລ້າງມືທີ່ມີສ່ວນປະສົມຂອງເຫຼົ້າເກົ້າສິບແມ່ນສາມາດເປັນອຸປະກອນທີ່ຊ່ວຍໃນການປ້ອງກັນຕົວເອງຈາກເຊື້ອໂລກໂຄວິດ-19 ໄດ້ ແລະ ເປັນອຸປະກອນທີ່ສາມາດຢຸດການກະຈາຍເຊື້ອໄປສູ່ບຸກຄົນອື່ນໄດ້ ແລະ ເປັນສິ່ງທີ່ທຸກຄົນຕ້ອງການ ແລະ ເປັນສິ່ງທີ່ມີການຊົມໃຊ້ກັນຫຼາຍຂຶ້ນຈົນກາຍເປັນເລື່ອງປົກກະຕິຂອງຕົນເອງ ເຊິ່ງສອດຄ່ອງກັບ ສຸພາພອນ ພອນລະຫົມບຸດ (2020) ພົບວ່າ New normalໃນຊ່ວງສະຖານະການການແຜ່ລະບາດຂອງໂຄວິດ-19 ການໃຊ້ວິຖີປະຈໍາວັນຈຶ່ງຈໍາເປັນຕ້ອງປ້ອງກັນຕົນເອງເພື່ອໃຫ້ມີຊີວິດລອດດ້ວຍການປັບວິຖີການດໍາລົງຊີວິດໃໝ່ເພື່ອໃຫ້ປອດໄພຈາກການຕິດເຊື້ອຄື: ໃສ່ໜ້າກາກຜ້າ ຫຼືໜ້າກາດອານາໄມກ່ອນອອກຈາກບ້ານເພື່ອປ້ອງກັນຕົນເອງ ແລະ ຫວ່າງໃຍຄົນອື່ນ, ເຮັດວຽກອອນລາຍ, ຮຽນອອນລາຍ, ອາຄານເຄຫະສະຖານຕັ້ງຈຸດຄັດກອງເຊື້ອ, ຮ້ານອາຫານຊື້ກັບບ້ານ ແລະ ໃຊ້ບໍລິການທາງອອນລາຍຫຼາຍຂຶ້ນ.

ນອກຈາກນີ້ວິຖີຊີວິດໃໝ່ຂອງປະຊາຊົນລາວຍັງຖືວ່າເຕັກໂນໂລຊີ, ດີຈິຕອນທີ່ມີໃນປັດຈຸບັນແມ່ນມີຄວາມສໍາຄັນຕໍ່ການດໍາລົງຊີວິດຂອງຕົນເອງຫຼາຍຂຶ້ນ ແລະ ຕົນເອງກໍ່ເປັນບຸກຄົນທີ່ສາມາດໃຊ້ງານເຄື່ອງມືດີຈິຕອນ ແລະ ອຸປະກອນໄອທີເຫຼົ່ານັ້ນໄດ້ຢ່າງຄຸ້ນເຄີຍ ແລະ ຊໍານານຫຼາຍຂຶ້ນ, ປະຊາຊົນຍັງຖືວ່າເຄື່ອງມືອຸປະກອນດີຈິຕອນ ແລະ ເຄື່ອງເຕັກໂນໂລຊີທີ່ມີໃນປັດຈຸບັນແມ່ນ ກາຍເປັນເລື່ອງປົກກະຕິໃນການໃຊ້ຊີວິດຂອງຕົນເອງເຊັ່ນ: ການເຮັດວຽກຢູ່ບ້ານ, ການສັ່ງຊື້ສິນຄ້າສົ່ງເຖິງໜ້າເຮືອນ, ການບໍລິການສົ່ງສິນຄ້າ ຫຼື ການຮຽນອອນລາຍ ແລະ ອື່ນໆ ເຊິ່ງສອດຄ່ອງກັບ ດຣ. ສະຫຼອງຣັດ ເຊີມາລະຊົນມາດ (2020 ) ພົບວ່າ ຊີວິດວິຖີໃໝ່ຂອງປະຊາກອນໂລກໃນຍຸກປ້ອງກັນການລະບາດຂອງໂຄວິດ-19 ມີແນວໂນ້ມທີ່ຈະຕ້ອງດໍາເນີນການສື່ສານທີ່ຈະຕ້ອງປັບປ່ຽນໄປຕາມສະພາບແວດລ້ອມ ແລະ ເຕັກໂນໂລຊີ ເຊິ່ງການລະບາດໂຄວິດ-19 ເປັນເລື່ອງສະພາບແວດລ້ອມໃໝ່ອັນເກີດຈາກໂລກໂຄວິດ-19 ເຮັດໃຫ້ມະນຸດຕ້ອງປັບຕົວໂດຍມີເຕັກໂນໂລຊີເປັນຕົວຊ່ວຍທີ່ສໍາຄັນ ແລະ ໃນອານາຄົດ ເມື່ອເຮົາຜ່ານພົ້ນວິກິດໂຄວິດ-19 ໄປແລ້ວວິຖີໃຫມ່ໃນການສື່ສານ ກໍ່ຈະກາຍເປັນເລື່ອງປົກກະຕິ.

ປະຊາຊົນຍັງໄດ້ມີການເຮັດວຽກຢູ່ບ້ານ (work

from home) ແທນໄປເຮັດວຽກຢູ່ຫ້ອງການ, ພ້ອມນີ້ຍັງໄດ້ໃຫ້ຄວາມສຳຄັນ ແລະ ຫຼີກລ້ຽງການຈັບ ແລະ ຖືເງິນສົດ ໂດຍຈະໃຊ້ບໍລິການຜ່ານທາງແອັບບໍລິການທາງການເງິນເວລາມີການຊຳລະສິນຄ້າ ຫຼື ມີການຮັບຊຳລະສິນຄ້າ ແລະ ຈະຫຼີກລ້ຽງການໄປຊື້ສິນຄ້າທີ່ຕະຫຼາດ, ຮ້ານຄ້າສະດວກຊື້, ຮ້ານຊັບພະສິນຄ້າ ໂດຍການຊື້ສິນຄ້າຜ່ານທາງອອນລາຍ ແລະ ມີການສົ່ງສິນຄ້າເຖິງເຮືອນຂອງຕົນເອງ ເຊິ່ງສອດຄ່ອງກັບບົດຄວາມຂອງ ນິຕະຍະພົນ, ບົດຄວາມດ້ານສຸຂະພາບຈິດ, ກົມສຸຂະພາບຈິດ (2020). ໄດ້ກ່າວວ່າ: ທ່າອ່ຽງພຶດຕິກຳແບບ New Normal ກັບຊີວິດວິຖີໃໝ່ຂອງຄົນໄທໃນດ້ານການໃຊ້ເຕັກໂນໂລຊີ ແລະ ອິນເຕີເນັດຈະເຂົ້າມາມີບົດບາດກັບການໃຊ້ຊີວິດຫຼາຍຂຶ້ນທີ່ຈາກແຕ່ກ່ອນມີຫຼາຍຢູ່ແລ້ວແຕ່ໃນສັງຄົມຍຸກ New Normal ສິ່ງເຫຼົ່ານີ້ຈະເຂົ້າໄປຢູ່ໃນທຸກຈັງຫວະຊີວິດ ບໍ່ວ່າຈະເປັນການຮຽນອອນລາຍ, ການເຮັດວຽກຢູ່ບ້ານ, ການປະຊຸມອອນລາຍ, ການຊື້ສິນຄ້າອອນລາຍ, ການເຮັດທຸລະກຳການເງິນ ແລະ ການບັນເທີງຊີວິດຮູບແບບຕ່າງເຊັ່ນ, ການເບິ່ງໜັງ ແລະ ຟັງເພງ.

ຜົນການສຶກສາຄວາມຄິດເຫັນຂອງປະຊາຊົນລາວຕໍ່ການໃຊ້ຊີວິດປົກກະຕິໃນຊ່ວງທີ່ມີການແຜ່ລະບາດຂອງພະຍາດໂຄວິດ-19 ດ້ານສຸຂະພາບ ຫຼື ການເບິ່ງແຍງຕົນເອງເພື່ອປ້ອງກັນພະຍາດໂຄວິດ-19 ພົບວ່າ: ປະຊາຊົນລາວໄດ້ຫຼຸດຜ່ອນການອອກໄປພົບປະຜູ້ຄົນໃນສັງຄົມ ແລ້ວຫັນມາໃຊ້ວັກຊີນ ແລະ ເຮັດວຽກຢູ່ບ້ານ ແລະ ມີເວລາໃຫ້ຄອບຄົວຫຼາຍຂຶ້ນ, ປະຊາຊົນລາວຫັນມາໃຫ້ຄວາມສຳຄັນໃນການຮັບປະທານອາຫານທີ່ມີປະໂຫຍດຕໍ່ສຸຂະພາບ, ມີຄວາມປອດໄພ ແລະ ມີຄວາມສະອາດ ໂດຍເນັ້ນບໍລິໂພກອາຫານທີ່ມາຈາກທຳມະຊາດ ຫຼື ສິນຄ້າອໍແກນິກຫຼາຍຂຶ້ນ ແລະ ຫັນມາອອກກຳລັງກາຍຫຼາຍຂຶ້ນ, ຫັນມາເບິ່ງແຍງສຸຂະພາບຕົນເອງ, ໃສ່ໃຈຕົນເອງ ແລະ ຮັກສາຕົນເອງຫຼາຍຂຶ້ນ ແລະ ສຸຂະພາບຂອງຄອບຄົວຫຼາຍຂຶ້ນ ສອດຄ່ອງກັບການສຶກສາຂອງ ສວນດຸສິດໂພ (2020) ໄດ້ສຶກສາກ່ຽວກັບ ຄວາມຄິດເຫັນຂອງປະຊາຊົນທົ່ວປະເທດກໍລະນີ "New Normal ຂອງຄົນໄທຈາກສະຖານະການໂຄວິດ-19" ພົບວ່າ: ປະຊາຊົນຊາວໄທປ່ຽນພຶດຕິກຳການໃຊ້ວິດຊີດແບບປົກກະຕິຂອງຕົນເອງເພື່ອປອດໄພຈາກໂຄວິດ-19 ຄື: ເບິ່ງແຍງໂຕເອງໂດຍໃສ່ໜ້າກາກອະນາໄມ, ລ້າງມືເລື້ອຍໆ, ຊື້ຂອງກິນຂອງໃຊ້ໂດຍເນັ້ນຄວາມສະອາດ, ປອດໄພ, ເອົາໃຈໃສ່ສຸຂະພາບອອກກຳລັງກາຍ, ກິນວິຕາມິນ ແລະ ອາຫານທີ່ມີໂພຊະນາການ.

## 5. ສະຫຼຸບ

ຜົນການສຶກສາລະດັບຄວາມຮູ້ ຄວາມເຂົ້າໃຈຂອງປະຊາຊົນລາວຕໍ່ກັບພະຍາດໂຄວິດ-19 ສາມາດສະຫຼຸບໄດ້ຄື: ປະຊາຊົນລາວສ່ວນໃຫຍ່ແມ່ນເປັນຜູ້ທີ່ຮູ້ຈັກກັບພະຍາດໂຄວິດ-19 ແລະ ໂດຍລວມແລ້ວທັດສະນະຕິຂອງປະຊາຊົນລາວທີ່ມີຕໍ່ການໃຊ້ວິຖີຊີວິດປົກກະຕິແບບໃໝ່ ໃນຊ່ວງການແຜ່ລະບາດພະຍາດ Covid-19 ແມ່ນຖືວ່າປະຊາຊົນລາວມີຄວາມຮູ້ ຄວາມເຂົ້າໃຈຫຼາຍທີ່ສຸດຕໍ່ກັບພະຍາດໂຄວິດ-19 ແລະ ແນວທາງການປ້ອງກັນທີ່ຖືກຕ້ອງ.

ຜົນການສຶກສາດ້ານພຶກຕິກຳການປະຕິບັດຕົວຂອງປະຊາຊົນລາວຕໍ່ການປ້ອງກັນພະຍາດໂຄວິດ-19 ສາມາດສະຫຼຸບໄດ້ຄື: ປະຊາຊົນລາວມີພຶດຕິກຳໃນການປະຕິບັດຕົວເພື່ອປ້ອງກັນຕົວເອງຈາກພະຍາດໂຄວິດ-19 ໄດ້ຢູ່ໃນລະດັບທີ່ດີ ແລະ ຖືກຕ້ອງຫຼາຍໄດ້ແກ່: ມີການຫຼີກລ້ຽງການສຳພັດກັບຜູ້ອື່ນໆ, ມີການລ້າງມືທຸກຄັ້ງດ້ວຍເຈວທີ່ມີເຫຼົ້າເກົ້າສິບປະສົມເມື່ອມີການຈັບບາຍສິ່ງຂອງໃນທີ່ສາທາລະນະ ແລະ ມີການຮັບປະທານອາຫານທີ່ມີປະໂຫຍດ, ເປັນຜູ້ທີ່ຮູ້ຈັກຂໍ້ມູນກ່ຽວກັບພະຍາດໂຄວິດ-19 ແລະ ວິທີການປ້ອງກັນເຊື້ອໂລກໂຄວິດ-19 ຈາກຊ່ອງທາງສື່ສັງຄົມອອນລາຍ ແລະ ເປັນຜູ້ທີ່ມີຄວາມສາມາດໃນການຮັບຮູ້, ຄົ້ນຫາ ແລະ ເຂົ້າເຖິງແຫຼ່ງຂໍ້ມູນຂໍ້ມູນກ່ຽວກັບພະຍາດໂຄວິດ-19 ໄດ້ທັນທີ ແລະ ທັນສະໄໝ.

ຜົນການສຶກສາຄວາມຄິດເຫັນຂອງປະຊາຊົນລາວຕໍ່ການໃຊ້ຊີວິດປົກກະຕິໃນຊ່ວງທີ່ມີການແຜ່ລະບາດຂອງພະຍາດໂຄວິດ-19 ສາມາດສະຫຼຸບໄດ້ຄື: ປະຊາຊົນລາວມີຄວາມຄິດເຫັນວ່າໜ້າກາກອະນາໄມທີ່ໃຊ້ປິດປາກ-ປິດດັງ

ແລະ ເຈວລ້າງມືທີ່ມີສ່ວນປະສົມຂອງເຫຼົ້າເກົ້າສິບແມ່ນ ສາມາດເປັນອຸປະກອນທີ່ຊ່ວຍໃນການປ້ອງກັນຕົວເອງ ຈາກເຊື້ອພະຍາດໂຄວິດ -19 ໄດ້ ແລະ ເປັນອຸປະກອນທີ່ ສາມາດຢຸດການກະຈາຍເຊື້ອໄປສູ່ບຸກຄົນອື່ນໄດ້ໃນລະດັບ ດີ, ເພື່ອເປັນການເບິ່ງແຍງຕົນເອງ ແລະ ເພື່ອປ້ອງກັນພະ ຍາດໂຄວິດ-19 ແມ່ນຄວນຫຼຸດຜ່ອນການອອກໄປພົບປະ ຜູ້ຄົນໃນສັງຄົມ ແລະ ຫັນມາເຮັດວຽກຢູ່ບ້ານ, ຫັນມາໃຫ້ ຄວາມສຳຄັນໃນການຮັບປະທານອາຫານທີ່ມີປະໂຫຍດຕໍ່ ສຸຂະພາບ, ມີຄວາມປອດໄພ ແລະ ມີຄວາມສະອາດ, ຄວນມີລະບຽບວິໄນໃນການໃຊ້ເງິນຂອງຕົນເອງຫຼາຍຂຶ້ນ ຄຳນຶງເຖິງການໃຊ້ຈ່າຍເງິນ, ຄວນຫັນມາໃຫ້ຄວາມສຳຄັນ ຕໍ່ການອອມເງິນຂອງຕົນເອງໃນອະນາຄົດຫຼາຍຂຶ້ນ ແລະ ເລີ່ມມີຄວາມສົນໃຈລົງທຶນໃນຕະຫຼາດຫຸ້ນຂອງຕະຫຼາດ ຫຼັກຊັບແຫ່ງຊາດລາວຫຼາຍຂຶ້ນ ແລະ ຫັນມາໃຫ້ຄວາມສຳ ຄັນ ແລະ ສົນໃຈລົງທຶນໃນຕະຫຼາດທອງຄຳຫຼາຍຂຶ້ນ ແລະ ມີຄວາມຄິດເຫັນວ່າບັນດາຮ້ານຄ້າຕ້ອງມີຈຸດກັ້ນກອງ ແລະ ມີເຈວແອວກໍຮໍອະນາໄມມືກ່ອນເຂົ້າຮ້ານ ແລະ ສຳ ລັບການ ການບໍລິການທາງການແພດຕ້ອງມີແອບພິເຄເຊິນ ເພື່ອບໍລິການສຸຂະພາບຂັ້ນພື້ນຖານ.

## 6. ຂໍ້ຂັດແຍ່ງ

ພວກເຮົາ (ທີມງານນັກຄົ້ນຄວ້າ) ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ ມີຂໍ້ຂັດແຍ່ງທາງຜົນປະໂຫຍດໃດໆ ທັງນັ້ນ, ກໍລະນີມີການ ລະເມີດໃນຮູບການໃດກໍ່ຕາມ ພວກເຮົາມີຄວາມຍິນດີ ຂໍ ຮັບຜິດຊອບແຕ່ພຽງຝ່າຍດຽວ.

## 7. ເອກະສານອ້າງອີງ (Reference)

ກົມອະນາໄມ ແລະ ສົ່ງເສີມສຸຂະພາບ ກະຊວງສາທາລະນະ ສຸກ. (2021). ຄູ່ມືແນະນຳຫຼັກການອະນາໄມ ແລະ ຂ້າເຊື້ອເພື່ອປ້ອງກັນການລະບາດພະຍາດໂຄວິດ-19 ສະບັບເດືອນ ເມສາ 2021.

ກະຊວງສາທາລະນະສຸກ. (2021). ບົດລາຍງານຖະແຫຼງ ຂອງຫ້ອງປະຕິບັດງານ ເຫດການສຸກເສີນດ້ານສາ ທາລະນະສຸກ ເມື່ອວັນທີ 24 ມີນາ 2020 ນະຄອນ ຫຼວງວຽງຈັນ. ສືບຄົ້ນວັນທີ 12 ພຶດສະພາ 2021. ແຫຼ່ງທີ່ມາ: https://www.covid1 9 . gov. la/index.php.

ກະຊວງສາທາລະນະສຸກ. (2021). ບົດລາຍງານຖະແຫຼງ ຂອງຫ້ອງປະຕິບັດງານ ເຫດການສຸກເສີນດ້ານສາ ທາລະນະສຸກ, 7 ມິຖຸນາ 2021, ນະຄອນຫຼວງວຽງ ຈັນ. ສືບຄົ້ນວັນທີ 8 ມິຖຸນາ 2021. ແຫຼ່ງທີ່ມາ: https://www.covid19.gov.la/index.php.

ກະຊວງສາທາລະນະສຸກ. (2021). ການເຮັດວຽກຂອງວັກ ຊີນໂຄວິດ-19. ສືບຄົ້ນວັນທີ 4 ມີນາ 2021. ແຫຼ່ງຂໍ້ ມູນ: www.cdc.gov/coronavirus/2019-ncov /vaccines/different-vaccines/mrna.html

ກົມສຸຂະພາບຈິດ. ກະຊວງສາທາລະນຸສຸກແຫ່ງປະເທດ ໄທ. (2020). ວິຖີຊີວິດໃໝ່. ສືບຄົ້ນວັນທີ 7 ເມສາ 2021. ແຫຼ່ງຂໍ້ມູນ: www.dmh.go.th/news/ view.asp?id=2288.

ຄາໂຣດ ໂອໂດແນວ. (2020). ໂຄວິດ-19 ແລະ ແນວທາງ ການປ້ອງກັນ. ສູນການສຶກສາວິທະຍາສາດ ສະມິດ ໂຊນຽນ, ວິທະຍາສາດ ເພື່ອເປົ້າໝາຍລະດັບໂລກ.

ສວນດຸສິດໂພ ມະຫາວິທະຍາໄລສວນດຸສິດ. (2020) . ຄວາມຄິດເຫັນຂອງປະຊາຊົນທົ່ວປະເທດ ກໍລະນີ "ວິຖີຊີວິດໃຫມ່ຂອງຄົນໄທຈາກສະຖານະການ ໂຄ ວິດ-19".

ສຸພາພອນ ພອນລະຫົມບຸດ. (2020). ວິຖີຊີວິດໃໝ່ກັບ ວິຖີຊີວິດທີ່ປ່ຽນແປງ. ກົມສົ່ງເສີມອຸດສາຫະກຳ. ສືບຄົ້ນວັນທີ 21 ພຶດສະພາ 2021. ແຫຼ່ງຂໍ້ມູນ: https://dsp.dip.go.th/th/category/2017.

ສະຖາບັນສະມິດໂຊນຽມ. (2020). ວິທະຍາສາດເພື່ອເປົ້າ ໝາຍລະດັບໂລກ. ພິມຄັ້ງທີ່ 1:2020.

ດຣ. ສະຫຼອງຣັດ ເຊີມາລະຊິນມາດ. (2020). ວິຖີຊີວິດໃນ ອານາຄົດກັບວິຖີໃໝ່ແຫ່ງການສື່ສານ. ມະຫາ ວິທະຍາໄລລັງສິດ. ສືບຄົ້ນວັນທີ 20 ພຶດສະພາ 2021. ແຫຼ່ງຂໍ້ມູນ: https://www2.rsu.ac.th/ sarnrangsit-online-detail/CommArts Article15.

ທານິນ ສິນລະຈາຣຸ. (2010). ການວິໄຈ ແລະ ວິເຄາະຂໍ້ມູນທາງສະຖິຕິດ້ວຍ SPSS.

ນັດຖະວັນ ຄຳແສນ. (2021). ຄວາມຮູ້ ທັດສະນະຄະຕິ ແລະ ພຶດຕິກຳໃນການປ້ອງກັນຕົນເອງຈາກການຕິດເຊື້ອໄວລັດໂຄວິດ-19 ຂອງປະຊາຊົນໃນເຂດເມືອງ ອູ່ທອງ ແຂວງສຸພັນບູລີ. ບົດຄວາມວິໄຈ, *ວາລະສານວິທະຍາໄລພະຍາບານພະຈອມເກົ້າ ຈັງຫວັດເພັດບູລີ ປີທີ 4,* ສະບັບທີ 1 ມັງກອນ-ເມສາ 2021.

ບໍດິນ ຊາຕະເວທີ. (2020). ພຶດຕິກຳກັບວິຖີຊີວິດໃຫມ່. ຄະນະການແພດແຜນໄທ ມະຫາວິທະຍາ ໄລສົງຂານະຄະລິນ. ສືບຄົ້ນວັນທີ 20 ເມສາ 2021. ແຫຼ່ງຂໍ້ມູນ: http://www.ttmed.psu.ac.th/blog.php.

ປາໂມດ ຖ່າງກະໂທກ. (2020). ຄວາມຮອບຮູ້ດ້ານສຸຂະພາບກ່ຽວກັບການປ້ອງກັນການລະບາດຂອງໂລກຕິດເຊື້ອໄວລັດໂຄໂລນ່າ 2019 ຂອງປະຊາຊົນຊາວໄທ.

ປະລິຍານັນ ມະລິວັນ. (2020). ຄູ່ມືຄູສຳລັບການຈັດກິດຈະກຳສົ່ງເສີມການຮຽນຮູ້ກ່ຽວກັບໂລກໂຄວິດ-19. ອົງການຢູນິເຊັບປະເທດໄທ.

ໄພວັນ ປຸນນາລີ. (2018). ສະຖິຕິສຳລັບການວິໄຈ. ມະຫາວິທະຍາໄລສຸພານຸວົງ.

ແພດໂລກຕິດເຊື້ອ ແລະ ລະບາດວິທະຍາ, ຄະນະແພດສາດ ໂຮງພະຍາບານລາມາທິບໍດີ, ມະຫາວິທະຍາໄລມະຫິດົນ. (2020). ຄວາມຮູ້ພື້ນຖານກ່ຽວກັບໂຄວິດ-19 ຕອນທີ່ 1 ໂລກໂຄວິດ 19, ການຕິດເຊື້ອ, ການປ່ວຍ, ການເບິ່ງແຍງຮັກສາ, ການປ້ອງກັນການແພ່ເຊື້ອ ແລະ ການຕິດເຊື້ອ.

ພິລະພັດ ໃຈແກ້ວມາ. (2021). ພຶດຕິກຳການດຳລົງຊີວິດແບບໃຫມ່ຂອງປະຊາຊົນຊາວໄທລະຫວ່າງວິກິດໂຄວິດ-19 ທີ່ປະກົດໃນສື່ອອນລາຍ. ວິທະຍານິພົນຈົບຊັ້ນປະລິນຍາຕີ. ມະຫາວິທະຍາໄລນະເລສວນ.

Azlan, A. A., Hamzah, M. R., Sern, T. J., Ayub, S. H., & Mohamad, E. (2020). Public knowledge, attitudes and practices towards COVID-19: A cross-sectional study in Malaysia. PLOS ONE, 15(5), e0233668. doi: 10.1371/journal.pone.0233668.

Ds Briggs AM. (2020). COVID-19: moving towards the new normal. Asia-Pacific *Journal of health Management*. 15(4): i581. Doi:10.24083/apjhm.v15i4.581.

Zhong, B. L., Luo, W., Li, H. M., Zhang, Q. Q., Liu, X. G., Li, W. T., & Li, Y. (2020). Knowledge, attitudes, and practices towards COVID-19 among Chinese residents during the rapid rise period of the COVID-19 outbreak: A quick online cross-sectional survey. *International Journal of Biological Sciences*, 16(10), 1745–1752. doi: 10.7150/ijbs.45221.